ຮ່ວມກັນຈັດຕັ້ງປະຕິບັດ, ຮ່ວມກັນແກ້ໄຂບັນຫາ

MEKONG RIVER COMMISSION
MRC
FOR SUSTAINABLE DEVELOPMENT

# ການປຶກສາຫາລືຂ້າມຊາຍແດນ

ພາຍໃຕ້

## ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳ ແບບປະສົມປະສານ ໃນຂົງເຂດແມ່ນ້ຳຂອງ






## ໂຄງການຄຸ້ມຄອງຊັບພະຍາກອນ ນ້ຳຂ້າມຊາຍແດນ

1. ໂຄງການຄຸ້ມຄອງດິນບໍລິເວນນ້ຳ ໃນເຂດແມ່ນ້ຳກ່ຳ ແລະ ເຊບັ້ງຫຽງ
2. ໂຄງການຄຸ້ມຄອງການປະມົງ ໃນແມ່ນ້ຳເຊກອງ ແລະ ແມ່ນ້ຳຂອງ
3. ໂຄງການຄຸ້ມຄອງ ຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳ ເຊປ່ອກ ແລະ ເຊສານ
4. ໂຄງການຄຸ້ມຄອງຊັບພະຍາກອນນ້ຳໃນ ເຂດສາມຫຼ່ຽມປາກແມ່ນ້ຳຂອງ
5. ໂຄງການເຜີຍແຜ່ບົດຮຽນກ່ຽວກັບ ອ່າງທະເລສາບສົງຂລາ ແລະ ຕົ່ງເລຊາບ

# ການຮ່ວມມືຂ້າມຊາຍແດນ ໃນຂົງເຂດແມ່ນ້ຳຂອງ

ແມ່ນນ້ຳຂອງມີໄລຍະຍາວເຖິງ 4,900 ກມ ໄຫຼຜ່ານ ຫົກປະເທດໃນ ອາຊີ ຄື ຈາກ ສປ ຈີນ ໄປເຖິງ ສສ ຫວຽດນາມ ກ່ອນທີ່ຈະໄຫຼລົງໄປສູ່ທະເລ. ແມ່ນ້ຳຂອງ ເປັນໜຶ່ງໃນແມ່ນ້ຳທີ່ມີຄວາມຫຼາກຫຼາຍດ້ານ ຊີວະນາໆພັນ ແລະ ໃຫຍ່ທີ່ສຸດໃນໂລກ ເຊິ່ງ ປະກອບສ່ວນຕໍ່ລະບົບນິເວດວິທະຍາທີ່ອຸດົມຮັ່ງມີ ແລະ ຊັບພະຍາກອນທຳມະຊາດ ທີ່ອຸດົມສົມບູນ ໃຫ້ແກ່ ປະເທດ ແລະ ປະຊາຊົນ ຕາມແຄມແມ່ນ້ຳຂອງ. ການຄຸ້ມຄອງຊັບພະຍາກອນເຫຼົ່ານີ້ແບບຂ້າມຊາຍແດນ ແມ່ນມີຄວາມສຳຄັນຍິ່ງໃນການຄຸ້ມຄອງ ເນື່ອງຈາກວ່າ ນ້ຳ, ປາ ແລະ ຕະກອນ ຈະໄຫຼຈາກ ປະເທດໜຶ່ງໄປອີກປະເທດໜຶ່ງ. ເຖິງຢ່າງໃດກໍຕາມ, ການຄຸ້ມຄອງແມ່ນ້ຳຂ້າມຊາຍແດນ ໄດ້ເປັນວຽກງານທີ່ທ້າທາຍ ສຳລັບປະເທດ ໃນອ່າງແມ່ນ້ຳຂອງ ຍ້ອນວ່າ ແຕ່ລະປະເທດ ມີຄວາມຕ້ອງການ ແລະ ບູລິມະສິດ ທີ່ແຕກຕ່າງກັນ.

ການປຶກສາຫາລືຂ້າມຊາຍແດນ ຈະຊ່ວຍ ຫລຸດຜ່ອນ ຄວາມເຄັ່ງຕຶງ ແລະ ເພີ່ມທະວີການຮ່ວມມື ລະຫວ່າງ ປະເທດ. ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ສະໜັບສະໜູນ ປະເທດສະມາຊິກທັງສີ່ ໃນອ່າງແມ່ນ້ຳຂອງຕອນລຸ່ມ ເຊິ່ງມີ ຣາຊະອານາຈັກ ກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ ເພື່ອປັບປຸງການ ຮ່ວມມືຂ້າມຊາຍແດນຜ່ານ ໂຄງການຄຸ້ມຄອງຊັບພະຍາກອນນ້ຳ ແບບປະສົມ ປະສານໃນຂົງເຂດແມ່ນ້ຳຂອງ ຕອນລຸ່ມ. ໂຄງການດັ່ງກ່າວສົ່ງເສີມ ການນຳໃຊ້ ວິທີການຄຸ້ມຄອງ ຊັບພະຍາກອນນ້ຳແບບປະສົມປະສານ ບົນ ພື້ນຖານ ການວາງແຜນ ແລະ ການຄຸ້ມຄອງ ທີ່ມີ ການປະສານງານກັນ ແລະ ນຳໃຊ້ ລະບຽບການ ຂອງ ຄມສ ເຊິ່ງ ເປັນລະບຽບການ ແລະ ເຄື່ອງມື ທາງດ້ານວິຊາການ ໃນການວາງແຜນ ການນຳໃຊ້ນ້ຳ, ການແລກປ່ຽນຂໍ້ມູນ ແລະ ການຕິດຕາມ ກວດກາການໄຫຼຂອງນ້ຳ.



ໂຄງການໄດ້ລິເລີ່ມໃນປີ 2009 ໂດຍມີ ອົງປະກອບທີ່ກ່ຽວຂ້ອງກັນ ໃນສາມລະດັບຄື ລະດັບພາກພື້ນ, ລະດັບຂ້າມຊາຍແດນ ແລະ ລະດັບປະເທດ ເພື່ອເສີມຂະຫຍາຍການຮ່ວມມືດ້ານການຄຸ້ມ ຄອງຊັບພະຍາກອນນ້ຳແບບປະສົມປະສານ ລະຫວ່າງ ສີ່ປະເທດສະມາຊິກ ໃນລະດັບອ່າງ ແລະ ທ້ອງຖິ່ນ. ອົງປະ ກອບລະດັບພາກພື້ນເຊິ່ງໄດ້ຮັບການສະ ໜັບສະໜູນ ໂດຍ ລັດຖະບານອົດສະຕາລີ ໄດ້ສຳເລັດລົງ ໃນປີ 2015 ພາຍຫຼັງ ທີ່ໄດ້ມີການ

ນຳໃຊ້ລະບຽບການ ຂອງ ຄມສ ແລະ ບົດແນະນຳທາງດ້ານວິຊາການ ກໍຄື ພັດທະນາ ຊຸດເຄື່ອງມືແບບຈຳລອງ ເພື່ອການນຳໃຊ້ນ້ຳ ໃນລະດັບອ່າງ.

ໃນຂະນະທີ່ອົງປະກອບຂ້າມຊາຍແດນແນໃສ່ ການຮ່ວມມື ດ້ານການຄຸ້ມຄອງການນຳໃຊ້ນ້ຳແບບສອງຝ່າຍ, ອົງປະກອບລະດັບຊາດ ສະໜັບສະໜູນແຕ່ລະປະເທດສະມາຊິກ ເພື່ອປັບປຸງກົນໄກການປົກຄອງ ແລະ ສ້າງຄວາມອາດສາມາດທາງດ້ານວິຊາການ ໃນການວາງແຜນ ແລະ ການນຳໃຊ້ນ້ຳ ພາຍໃນຂອບເຂດປະເທດໃນລັກສະນະທີ່ມີການປະສານງານກັນ. ທະນາຄານໂລກ ໄດ້ສະໜັບສະໜູນທຶນເຂົ້າໃສ່ ທັງອົງປະກອບລະດັບຊາດ ແລະ ຂ້າມຊາຍແດນ.

## ການສົ່ງເສີມ ວຽກງານຮ່ວມມືສອງຝ່າຍ

ພາຍໃຕ້ອົງປະກອບຂ້າມຊາຍແດນ, ປະເທດໃນອ່າງແມ່ນ້ຳທັງສີ່ປະເທດ ໄດ້ ສ້າງໂຄງການ ຮ່ວມມືສອງຝ່າຍ ລວມມີ ຫ້າໂຄງການ ໂດຍແນໃສ່ ການຄຸ້ມຄອງວຽກງານການປະມົງ, ດິນບໍລິເວນນ້ຳ, ສາມຫຼ່ຽມປາກແມ່ນ້ຳ, ທະເລສາບ ແລະ ອ່າງແມ່ນ້ຳ ເພື່ອຄຸ້ມຄອງຂະແໜງການທີ່ຕິດພັນກັບ ການນຳໃຊ້ນ້ຳຂ້າມຊາຍແດນ ເຊັ່ນ: ການພັດທະນາຕົວເມືອງ, ການພັດທະນາພື້ນຖານໂຄງລ່າງ ແລະ ການປ່ຽນແປງດິນຟ້າອາກາດ ທີ່ກະທົບຕໍ່ຊຸມຊົນຜູ້ອາໃສຢູ່ລຽບຕາມແຄມແມ່ນ້ຳຂອງ.

ຜ່ານການປຶກສາຫາລືຂ້າມຊາຍແດນ, ທັງສີ່ປະເທດສະມາຊິກຈະສ້າງຄວາມເຂົ້າໃຈຮ່ວມກັນ ກ່ຽວກັບ ບັນຫາການຄຸ້ມຄອງນ້ຳຂ້າມຊາຍແດນ, ຫາວິທີແກ້ໄຂທີ່ຍືນຍົງໂດຍການເຮັດວຽກຮ່ວມກັນ ແລະ ແລກປ່ຽນ ບົດຮຽນພາກປະຕິບັດທີ່ດີທີ່ສຸດໃນການຄຸ້ມຄອງຊັບພະຍາກອນນ້ຳ. ລວມເຂົ້າກັນແລ້ວ ໂຄງການເຫຼົ່ານີ້ ໄດ້ຖືກອອກແບບຂຶ້ນມາເພື່ອສ້າງຄວາມເຂັ້ມແຂງໃນລະດັບຊາດ ແລະ ແຂວງ ສຳລັບການນຳໃຊ້ນ້ຳທີ່ມີລັກສະນະປະສານສົມທົບ ແລະ ສ້າງຂອບວຽກທາງດ້ານການຈັດຕັ້ງເພື່ອການຄຸ້ມຄອງຮ່ວມກັນ ໂດຍ ວິທີການຄຸ້ມຄອງ ຊັບພະຍາກອນນ້ຳແບບປະສົມປະສານຂ້າມຊາຍແດນ.

ໂຄງການເຫຼົ່ານີ້ ໄດ້ເລີ່ມຈັດຕັ້ງປະຕິບັດ ໃນປີ 2013 ແລະ 2014 ແລະ ກຳນົດໃຫ້ສຳເລັດໃນເດືອນ ມີນາ 2018. ຄາດວ່າ ການຮ່ວມມືປະສານງານດ້ານການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ຈະດຳເນີນການຕໍ່ໄປພາຍຫຼັງໂຄງການໄດ້ສິ້ນສຸດລົງ ໂດຍມີແຜນພັດທະນາລະດັບຊາດສະບັບໃໝ່ ທີ່ນຳໃຊ້ບົດຮຽນທີ່ ຖອດຖອນໄດ້ຈາກໂຄງການເຫຼົ່ານີ້. ສິ່ງດັ່ງກ່າວຈະນຳຜົນປະໂຫຍດມາສູ່ຊີວິດການເປັນຢູ່ຂອງຊຸມຊົນລຽບຕາມແຄມແມ່ນ້ຳ ແລະ ສົ່ງເສີມການພັດທະນາທີ່ຍືນຍົງ ໃນພາກພື້ນ.

## 5 ໂຄງການຮ່ວມມື ມີ :

- **ໂຄງການຄຸ້ມຄອງການປະມົງ ໃນແມ່ນ້ຳເຊກອງ ແລະ ແມ່ນ້ຳຂອງ** ລະຫວ່າງ ຣາຊະອານາຈັກກຳປູເຈຍ ແລະ ສປປ ລາວ ເພື່ອ ຈັດການກັບ ປະເດັນ ສາຍພັນປາຂາວ ທີ່ຫລຸດລົງ ແນໃສ່ປັບປຸງການຄຸ້ມຄອງຊັບພະຍາກອນນ້ຳຂ້າມຊາຍແດນ
- **ໂຄງການຄຸ້ມຄອງ ຊັບພະຍາກອນນ້ຳ ໃນອ່າງແມ່ນ້ຳ ເຊປ໋ອກ ແລະ ເຊສານ** ເພື່ອປັບປຸງການຮ່ວມມືຂ້າມຊາຍແດນລະຫວ່າງ ຣາຊະອານາຈັກ ກຳປູເຈຍ ແລະ ສສ ຫວຽດນາມ ທ່າມກາງການພັດທະນາພະລັງງານໄຟຟ້ານ້ຳຕົກ
- **ໂຄງການຄຸ້ມຄອງຊັບພະຍາກອນນ້ຳໃນເຂດສາມຫຼ່ຽມປາກແມ່ນ້ຳຂອງ** ລະຫວ່າງແຂວງຊາຍແດນ ຂອງ ຣາຊະອານາຈັກ ກຳປູເຈຍ ແລະ ສສ ຫວຽດນາມ ທີ່ໄດ້ຮັບຜົນກະທົບ ຈາກ ການພັດທະນາໃນເຂດຕອນເທິງ ແລະ ການປ່ຽນແປງດິນຟ້າອາກາດ
- **ໂຄງການຄຸ້ມຄອງດິນບໍລິເວນນ້ຳ ໃນເຂດແມ່ນ້ຳກ່ຳ ແລະ ເຊບັ້ງຫຽງ** ລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ ເພື່ອ ສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງຊັບພະຍາກອນດິນບໍລິເວນນ້ຳ ຜ່ານການແລກປ່ຽນຄວາມຮູ້
- **ໂຄງການເຜີຍແຜ່ບົດຮຽນ ຂອງ ອ່າງທະເລສາບສົງຂລາ ແລະ ຕົ່ງເລຊາບ** ລະຫວ່າງ ຣາຊະອານາຈັກ ກຳປູເຈຍ ແລະ ຣາຊະອານາຈັກໄທ ເພື່ອ ສົ່ງເສີມການຄຸ້ມຄອງ ທະເລສາບ ໂດຍຜ່ານກິດຈະກຳສື່ສານຕ່າງໆ



## ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ແມ່ນໃຜ?

ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ໄດ້ຖືກສ້າງຕັ້ງຂຶ້ນໂດຍ ສັນຍາແມ່ນ້ຳຂອງ ປີ 1995 ລະຫວ່າງ ຣາຊະອານາຈັກ ກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ ທີ່ເຮັດວຽກຮ່ວມກັນ ເພື່ອການພັດທະນາຊັບພະຍາກອນນ້ຳທີ່ຍືນຍົງ ໃນພາກພື້ນ ໂດຍຜ່ານການປຶກສາຫາລື ແລະ ການຮ່ວມມື. ຄມສ ໄດ້ກາຍເປັນກົນໄກ ກໍຄື ເວທີການທູດດ້ານການຄຸ້ມຄອງນ້ຳ ສຳລັບ ລັດຖະບານທັງສີ່ປະເທດ ໃນການເຈລະຈາ ແລະ ການແບ່ງປັນຜົນປະໂຫຍດຈາກ ການນຳໃຊ້ຊັບພະຍາກອນນ້ຳຮ່ວມກັນ ແລະ ເປັນສູນກາງຄວາມຮູ້ ກ່ຽວກັບ ການຄຸ້ມຄອງອ່າງໂດຍການນຳໃຊ້ບົດແນະນຳທາງດ້ານວິຊາການ, ເຄື່ອງມື ແລະ ຂໍ້ມູນທາງດ້ານວິທະຍາສາດ.



## ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ (ຄມຊສ) ແມ່ນຫຍັງ ?

ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ (ຄມຊສ) ແມ່ນ ຫຼັກການລະດັບໂລກໃນການວາງແຜນ ແລະ ນຳໃຊ້ຊັບພະຍາກອນນ້ຳແບບປະສົມປະສານ, ແນໃສ່ສ້າງຄວາມດຸ່ນດ່ຽງລະຫວ່າງ ຄວາມຕ້ອງການດ້ານ ການພັດທະນາ ເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃນຊຸມຊົນລຽບຕາມແຄມແມ່ນ້ຳ. ວິທີການດັ່ງກ່າວຮຽກຮ້ອງໃຫ້ມີການດຳເນີນງານຂອງຫຼາຍຂະແໜງການເພື່ອ ປະສານສົມທົບຄວາມຕ້ອງການ ເລື່ອງການນຳໃຊ້ຊັບພະຍາກອນທີ່ແຕກຕ່າງກັນແທນທີ່ຈະດຳເນີນງານແລະ ຄຳນຶງເຖິງສະເພາະຂະແໜງການ ໃດໜຶ່ງເທົ່ານັ້ນ ເຊັ່ນ ຂະແໜງການພັດທະນາພື້ນຖານໂຄງລ່າງ, ການຮັບປະກັນດ້ານສະບຽງອາຫານ ແລະ ລະບົບນິເວດວິທະຍາທີ່ອຸດົມສົມບູນ. ສະນັ້ນຈຶ່ງໄດ້ ສົ່ງເສີມຜັນຂະຫຍາຍວິທີການດັ່ງກ່າວ ໃນອ່າງ ແມ່ນ້ຳຂອງຕອນລຸ່ມ ໃນແຕ່ ລະປະເທດ, ລະຫວ່າງປະເທດ ແລະ ໃນອ່າງ.

## ລະບຽບການຂອງ ຄມສ ແມ່ນຫຍັງ?

ລະບຽບການ ຂອງ ຄມສ ມີ 5 ສະບັບ ແນໃສ່ຄຸ້ມຄອງການນຳໃຊ້ນ້ຳຮ່ວມກັນລະຫວ່າງປະເທດສະມາຊິກ, ສະໜັບສະໜູນການຈັດຕັ້ງປະຕິບັດສັນຍາແມ່ນ້ຳຂອງປີ 1995 ໃນການຮ່ວມມືກ່ຽວກັບການຄຸ້ມຄອງນ້ຳ.

**ລະບຽບການດັ່ງກ່າວມີ:**

- → ລະບຽບການ ແລກປ່ຽນ ຂໍ້ມູນຂ່າວສານ
- → ລະບຽບການ ຕິດຕາມການນຳໃຊ້ນ້ຳ
- → ລະບຽບການ ແຈ້ງໃຫ້ຊາບ, ປຶກສາຫາລືລ່ວງໜ້າ ແລະ ການຕົກລົງ
- → ລະບຽບການ ຮັກສາລະດັບການໄຫຼໃນລຳນ້ຳຂອງ
- → ລະບຽບການ ຄຸ້ມຄອງຄຸນນະພາບນ້ຳ

ລະບຽບການເຫຼົ່ານີ້ ພ້ອມທັງ ຂໍ້ມູນການຄົ້ນຄວ້າ ຂອງ ຄມສ, ບົດແນະນຳທາງດ້ານວິຊາການ ແລະ ເຄື່ອງມືແບບຈຳລອງຕ່າງໆ ຈະຊ່ວຍ ອຳນວຍຄວາມສະດວກໃນການຄຸ້ມຄອງ ຊັບພະຍາກອນນ້ຳແບບປະສົມປະສານ ໃນພາກພື້ນ.





# ໂຄງການຄຸ້ມຄອງການປະມົງ ໃນແມ່ນ້ຳເຊກອງ ແລະ ແມ່ນ້ຳຂອງ

## ການຮ່ວມມືເພື່ອຟື້ນຟູແນວພັນປາ

ແມ່ນ້ຳເຊກອງ ໄຫຼຈາກ ເຂດທີ່ສູງໃນພາກກາງ ຂອງ ສສ ຫວຽດນາມ ຫາພາກໃຕ້ ຂອງ ສປປ ລາວ ແລະ ພາກຕາເວັນອອກສ່ຽງເໜືອ ຂອງ ຣາຊະອານາຈັກ ກຳປູເຈຍ ແລ້ວ ໄຫຼລົງສູ່ ແມ່ນ້ຳຂອງ.

ແມ່ນ້ຳທັງສອງ ເປັນແຫຼ່ງ ຊັບພະຍາກອນນ້ຳທີ່ອຸດົມຮັ່ງມີ ເຕັມໄປດ້ວຍ ສັດຫຼາຍກວ່າ 210 ຊະນິດ ລວມທັງ ປາຂ່າ ແລະ ປາອື່ນໆ ຈຳນວນ 60 ສາຍພັນ ໃນແມ່ນ້ຳເຊກອງ ແລະ 800 ສາຍພັນໃນແມ່ນ້ຳຂອງ, ເຊິ່ງ ໃນນັ້ນ 580 ສາຍພັນ ແມ່ນສາຍພັນນ້ຳຈືດໃນ ແມ່ນ້ຳຂອງ. ການປະມົງ ແມ່ນກະດູກສັນຫຼັງ ຂອງ ເສດຖະກິດທ້ອງຖິ່ນ ທີ່ ສ້າງລາຍໄດ້ ແລະ ເປັນແຫຼ່ງອາຫານ ໃຫ້ກັບປະຊາຊົນທີ່ອາໃສຢູ່ຕາມແຂວງຊາຍແດນລະຫວ່າງ ຣາຊະອານາຈັກ ກຳປູເຈຍ ແລະ ສປປ ລາວ ທີ່ ທັງສອງແມ່ນ້ຳໄຫຼມາຈອດກັນ.

ແຕ່ວ່າ ແມ່ນ້ຳທັງສອງ ໄດ້ພົບກັບສິ່ງທ້າທາຍສົມຄວນ ນັບແຕ່ ການປະມົງດ້ວຍວິທີການທີ່ບໍ່ເໝາະສົມ ແລະ ການພັດທະນາໂຄງລ່າງພື້ນຖານ ໃນຈັງຫວະທີ່ວ່ອງໄວ ເຊັ່ນ ການພັດທະນາພະລັງງານໄຟຟ້ານ້ຳຕົກ ແລະ ຊົນລະກະເສດ ທີ່ ນຳໄປສູ່ການທຳລາຍທີ່ຢູ່ອາໃສ ຂອງ ປະຊາກອນປາ. ຄວາມທ້າທາຍເຫຼົ່ານີ້ໄດ້ຮຽກຮ້ອງ ໃຫ້ມີການຮ່ວມມືດ້ານການດຳເນີນງານລະຫວ່າງ ຊຸມຊົນທີ່ອາໃສຢູ່ຕາມແຄມແມ່ນ້ຳ ຂ້າມຊາຍແດນ.

ຣາຊະອານາຈັກ ກຳປູເຈຍ ແລະ ສປປ ລາວ ໄດ້ດຳເນີນບາງມາດຕະການ ເພື່ອບັນເທົາຜົນກະທົບຕ່າງໆ, ແຕ່ທັງ ສອງປະເທດ ກໍຍັງຕ້ອງມີການຮ່ວມມືປະສານງານໃຫ້ຫຼາຍກວ່າເກົ່າ ເພື່ອໃຫ້ສາມາດ ປັບປຸງຄວາມຍືນຍົງ ຂອງລະບົບນິເວດແມ່ນ້ຳ ແລະ ຊັບພະຍາກອນທາງການປະມົງ ໃຫ້ໄດ້ປະສິດທິຜົນທີ່ສຸດ.

**ໂຄງການຄຸ້ມຄອງການປະມົງ ໃນແມ່ນ້ຳເຊກອງ ແລະ ແມ່ນ້ຳຂອງ**

| ປະເທດ: | ງົບປະມານ: | ໄລຍະເວລາ: |
|---|---|---|
| ຣາຊະອານາຈັກ ກຳປູເຈຍ, ສປປ ລາວ | US$ 535,200 | ກໍລະກົດ 2014 - ມີນາ 2018 |




## ການດຳເນີນງານຮ່ວມກັນ ເພື່ອ ການແກ້ໄຂບັນຫາ ຢ່າງຍືນຍົງ

ໂຄງການຄຸ້ມຄອງການປະມົງ ໃນແມ່ນ້ຳເຊກອງ ແລະ ແມ່ນ້ຳຂອງ ສະໜັບສະໜູນ ທັງສອງປະເທດ ໃນການສ້າງກົນໄກທີ່ເໝາະສົມໃນການຄຸ້ມຄອງ ຊັບພະຍາກອນການປະມົງ ຂອງ ທັງສອງແມ່ນ້ຳ ໃນແຂວງຕາມເຂດຊາຍແດນ ເຊິ່ງມີ ແຂວງ ກະແຈະ ແລະ ສະຕຶງແຕງ ໃນ ຣາຊະອານາຈັກ ກຳປູເຈຍ ແລະ ແຂວງອັດຕະປື ແລະ ຈຳປາສັກ ໃນ ສປປ ລາວ.

ໂຄງການໄດ້ກຳນົດບັນຫາທີ່ທັງສອງປະເທດປະເຊີນຮ່ວມກັນ ເຊິ່ງສົ່ງຜົນກະທົບຕໍ່ທັງສອງແມ່ນ້ຳ ໂດຍສະເພາະ ການຫລຸດລົງ ຂອງພັນປາຂາວ ຈາກ ການປະມົງທີ່ຫຼາຍເກີນໄປ, ອ່າງໂຕ່ງທີ່ເສື່ອມໂຊມ ແລະ ຜົນກະທົບຈາກບັນດາ ໂຄງການພະລັງງານໄຟຟ້ານ້ຳຕົກ. ຄະນະວິຊາການສອງຝ່າຍໄດ້ຮ່ວມກັນ ກຳນົດເອົາ ປາຂາວ 5 ສາຍພັນທີ່ມີຄວາມສຳຄັນ ຕໍ່ການຄ້ຳປະກັນດ້ານສະບຽງອາຫານ ໃຫ້ເປັນເປົ້າໝາຍໃນການຕິດຕາມກວດກາ.

ທັງສອງປະເທດ ໄດ້ເຮັດວຽກຮ່ວມກັນເພື່ອສ້າງ ລະບົບການຕິດຕາມກວດກາການປະມົງ ແລະ ແຜນການ ຄຸ້ມຄອງການປະມົງຮ່ວມກັນ ເພື່ອ ຈັດການກັບປະເດັນຂ້າມຊາຍແດນ. ຄວາມພະຍາຍາມດັ່ງກ່າວ ຈະສ້າງ ຄວາມເຂັ້ມແຂງໃນການຮ່ວມມືສອງຝ່າຍ ແລະ ຊ່ວຍຟື້ນຟູຊັບພະຍາກອນທາງການປະມົງ ທີ່ສະໜັບສະໜູນ ການຄ້ຳປະກັນດ້ານສະບຽງອາຫານ ແລະ ສ້າງໂອກາດພັດທະນາແຫຼ່ງພັກຜ່ອນ ທີ່ຕິດພັນ ກັບການຫາປາ.

## ຜົນໄດ້ຮັບຈາກໂຄງການ:

- ລະບຸບັນຫາ ກ່ຽວກັບ ການຄຸ້ມຄອງການປະມົງຂ້າມຊາຍແດນ ໃນແມ່ນ້ຳຂອງ ແລະ ແມ່ນ້ຳເຊກອງ.
- ສ້າງກົນໄກການປະສານງານຂ້າມຊາຍແດນ ເພື່ອ ຈັດການກັບບັນຫາດັ່ງກ່າວ.
- ສ້າງແຜນດຳເນີນງານສອງຝ່າຍ ເພື່ອຈັດຕັ້ງປະຕິບັດກົນໄກການປະສານງານ.



# ໂຄງການຄຸ້ມຄອງ ຊັບພະຍາກອນນໍ້າ ໃນອ່າງແມ່ນໍ້າ ເຊປ໋ອກ ແລະ ເຊສານ

## ການປະສານສົມທົບ ເພື່ອການນຳໃຊ້ນໍ້າຮ່ວມກັນ ຢ່າງຍືນຍົງ

ແມ່ນໍ້າເຊປ໋ອກ ແລະ ເຊສານ ແມ່ນ ແມ່ນໍ້າສາຂາຫຼັກ ຂອງ ແມ່ນໍ້າຂອງ ທີ່ໄຫຼຜ່ານ ພາກກາງ ຂອງ ສສ ຫວຽດນາມ ແລະ ພາກຕາເວັນອອກສ່ຽງເໜືອ ຂອງ ຣາຊະອານາຈັກ ກຳປູເຈຍ. ແມ່ນໍ້າທັງສອງນີ້ ຂຶ້ນຊື່ລືຊາເລື່ອງຄວາມຫຼາກຫຼາຍຂອງປາ ແລະ ເຂດປົກປັກຮັກສາທີ່ກວ້າງຂວາງ ເຊິ່ງ ສະໜັບສະໜູນ ຊີວິດການເປັນຢູ່ຂອງປະຊາຊົນ 4 ລ້ານ ກວ່າຄົນ ແລະ ມີ ຫຼາກຫຼາຍ ສາຍພັນນົກ ທີ່ມີຄວາມສຳຄັນໃນໂລກ.

ເຂດຕອນເທິງ ຂອງ ແມ່ນໍ້າເຫຼົ່ານີ້ ໄດ້ມີການພັດທະນາຫຼາຍ ໂດຍສ່ວນໃຫຍ່ ແມ່ນການຜະລິດພະລັງງານໄຟຟ້ານໍ້າຕົກ ແລະ ຊົນລະກະເສດ, ໃນຂະນະທີ່ຕອນລຸ່ມ ໄດ້ເລີ່ມມີການພັດທະນາຂະໜາດໃຫຍ່. ໂຄງການພື້ນຖານໂຄງລ່າງເຫຼົ່ານີ້ ໄດ້ສ້າງແຮງກົດດັນຕໍ່ລະບົບແມ່ນໍ້າ, ເຮັດໃຫ້ເກີດມີຄວາມ ແຫ້ງແລ້ງ ແລະ ນໍ້າຖ້ວມສຸ, ການເຊາະເຈື່ອນຂອງດິນ, ການເສື່ອມໂຊມຂອງ ອ່າງໂຕ່ງ ແລະ ຄຸນນະພາບນໍ້າຂ້າມຊາຍແດນ.

ການພັດທະນາຊົນລະປະທານ ແລະ ພະລັງງານໄຟຟ້ານໍ້າຕົກ ຈະສົ່ງຜົນກະທົບ ຕໍ່ຄຸນນະພາບນໍ້າ ແລະ ລະບົບນິເວດທາງນໍ້າ, ນຳໄປສູ່ ການຫລຸດລົງຂອງຊັບພະຍາກອນທາງການປະມົງ ແລະ ການສູນເສຍ ທາງດ້ານຊີວະນາໆພັນ ທີ່ກະທົບຕໍ່ ຄຸນນະພາບຊີວິດການເປັນຢູ່ຂອງ ຊຸມຊົນຕາມແຄມແມ່ນໍ້າ. ຕໍ່ສະພາບການດັ່ງກ່າວ ຈຶ່ງຮຽກຮ້ອງໃຫ້ທັງສອງປະເທດປະສານງານ ເລື່ອງການວາງ ບູລິມະສິດ ການພັດທະນາ ເພື່ອບັນເທົາຜົນກະທົບທີ່ຮ້າຍແຮງຕ່າງໆ.

| ໂຄງການ ຄຸ້ມຄອງຊັບພະຍາກອນນໍ້າໃນ ອ່າງແມ່ນໍ້າ ເຊປ໋ອກ ແລະ ເຊສານ | | |
|---|---|---|
| ປະເທດ: ຣາຊະອານາຈັກ ກຳປູເຈຍ, ສສ ຫວຽດນາມ | ງົບປະມານ: US$ 354,000 | ໄລຍະເວລາ: ພຶດສະພາ 2014 - ມີນາ 2018 |




ຣາຊະອານາຈັກ ກໍາປູເຈຍ ແລະ ສສ ຫວຽດນາມ ໄດ້ເຮັດ ວຽກຮ່ວມກັນ ເພື່ອ ນໍາໃຊ້ກາລະໂອກາດ ໃຫ້ສົມຄ່າ ຜ່ານການ ຮ່ວມມືປະສານງານສອງຝ່າຍ. ແນວໃດກໍຕາມ ກໍຍັງມີຄວາມ ຈໍາເປັນໃນການຫັດແໜ້ນການ ຮ່ວມມືຂ້າມຊາຍແດນ ໃຫ້ເຂັ້ມແຂງກວ່າເກົ່າ ເພື່ອການຄຸ້ມຄອງ ຊັບພະຍາກອນນໍ້າຮ່ວມກັນໃຫ້ດີຂຶ້ນເລື້ອຍໆ.

## ການດໍາເນີນງານຮ່ວມກັນ ເພື່ອ ການແກ້ໄຂ ບັນຫາຢ່າງຍືນຍົງ

ໂດຍສານຕໍ່ຈາກກົນໄກທີ່ມີຢູ່ແລ້ວ, ໂຄງການຄຸ້ມຄອງ ຊັບພະຍາກອນນໍ້າ ໃນອ່າງແມ່ນໍ້າ ເຊປ໋ອກ ແລະ ເຊສານ ໄດ້ຊ່ວຍສ້າງຂອບການເຮັດວຽກ ຮ່ວມກັນ ເພື່ອ ເສີມສ້າງຜັນຂະຫຍາຍ ການຮ່ວມມືສອງຝ່າຍ ທັງໃນລະດັບຊາດ ແລະ ລະດັບອ່າງ.

ທັງສອງປະເທດ ໄດ້ລະບຸ ບັນຫາບູລິມະສິດ ທີ່ຂັດຂວາງການຄຸ້ມຄອງຊັບພະຍາກອນ ນໍ້າລວມທັງ ການຂາດກົນໄກການຮ່ວມມືຂ້າມຊາຍແດນ, ການຂາດການແລກປ່ຽນຂໍ້ມູນກ່ຽວ ກັບການໄຫຼ ແລະ ການຄວບຄຸມນໍ້າຖ້ວມ ແລະ ລະບົບເຕືອນໄພລ່ວງໜ້າ ກໍຄື ຄວາມອາດສາມາດທີ່ຈໍາກັດ ໃນການຄຸ້ມຄອງຊັບພະຍາກອນຕ່າງໆ.

ຄະນະວິຊາການ ຂອງ ທັງສອງປະເທດ ໄດ້ເຮັດວຽກຮ່ວມກັນ ໃນການສ້າງກົນໄກການປະສານງານ ສອງຝ່າຍ ແລະ ແຜນດໍາເນີນງານ ເພື່ອຈັດການກັບ ບັນຫາໃນການນໍາໃຊ້ນໍ້າ ແລະ ປັບປຸງການແລກປ່ຽນຂໍ້ມູນ ກ່ຽວກັບການນໍາໃຊ້ ກໍຄື ການພັດທະນານໍ້າ. ການຮ່ວມມືດັ່ງກ່າວ ຈະຊ່ວຍຫລຸດຜ່ອນຜົນກະທົບ ແລະ ສົ່ງເສີມ ການຄຸ້ມຄອງຊັບ ພະຍາກອນນໍ້າຮ່ວມກັນຢ່າງຍືນຍົງ.

## ຜົນໄດ້ຮັບຈາກໂຄງການ:

- → ລະບຸບັນຫາ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນໍ້າ ຂ້າມຊາຍແດນ.
- → ສ້າງກົນໄກການປະສານງານຂ້າມຊາຍແດນ ເພື່ອ ຈັດການກັບບັນຫາດັ່ງກ່າວ.
- → ສ້າງແຜນດໍາເນີນງານສອງຝ່າຍ ເພື່ອຈັດຕັ້ງປະຕິບັດກົນໄກການປະສານງານ.



# ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳ ໃນເຂດ ສາມຫຼ່ຽມ ປາກແມ່ນ້ຳຂອງ

## ການປັບປຸງການນຳໃຊ້ນ້ຳເພື່ອ ຮັບປະກັນ ການຂະຫຍາຍຕົວທີ່ຍືນຍົງ

ສາມຫຼ່ຽມປາກແມ່ນ້ຳຂອງ ໃຫຍ່ເປັນອັນດັບ 3 ຂອງໂລກ, ກວມເອົາເນື້ອທີ່ປະມານ 55,000 ກິໂລຕາແມັດ ເຊິ່ງ ເປັນທົ່ງພຽງທີ່ອຸດົມສົມບູນ ກວມເອົາ ພາກກາງ ຂອງ ຣາຊະອານາຈັກ ກຳປູເຈຍ ຈົນຮອດ ພາກໃຕ້ ຂອງ ສສ ຫວຽດນາມ. ເຂດດັ່ງກ່າວເປັນທີ່ຮູ້ຈັກກັນດີວ່າເປັນ ເຂດຊັບພະຍາກອນທີ່ກວ້າງໃຫຍ່ຫຼາກຫຼາຍ ລວມມີທັງ ບຶງ, ປ່ານ້ຳຖ້ວມ ແລະ ທົ່ງນາເຂົ້າ. ສສ ຫວຽດນາມ ກວມເອົາສ່ວນໃຫຍ່ ຂອງ ເຂດດັ່ງກ່າວ ຈຶ່ງເຮັດໃຫ້ ສສ ຫວຽດນາມ ເປັນ ກະຕ່າ ຫຼື ແຫຼ່ງ ອາຫານຫຼັກຂອງ ອາຊີ.

ແຕ່ວ່າ, ຍ້ອນເຂດສາມຫຼ່ຽມປາກແມ່ນ້ຳຂອງ ນອນຢູ່ເຂດສົ້ນສຸດຂອງ ລະບົບແມ່ນ້ຳຂອງ, ເຂດດັ່ງກ່າວ ຈຶ່ງມີຄວາມບອບບາງສູງ ຕໍ່ ຜົນກະທົບຈາກໂຄງການພັດທະນາພະລັງງານໄຟຟ້ານ້ຳຕົກ, ການນຳໃຊ້ນ້ຳເພື່ອ ການເຮັດຊົນລະປະທານ ແລະ ການຄວບຄຸມນ້ຳຖ້ວມ ກໍຄື ການປ່ຽນແປງດິນຟ້າອາກາດ.

ແຮງກົດດັນເຫຼົ່ານີ້ ເຮັດໃຫ້ເກີດໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງຮ້າຍແຮງ, ດິນເຄັມ ແລະ ກາຍເປັນກົດ, ມົນລະພິດທາງນ້ຳ ເພີ່ມຂຶ້ນ, ເຂດທົ່ງພຽງນ້ຳຖ້ວມມີການເສື່ອມໂຊມ ແລະ ການຕົກຕະກອນທີ່ຫລຸດລົງ. ການພັດທະນາ ແລະ ການຄຸ້ມຄອງຊັບພະຍາກອນໃນເຂດດັ່ງກ່າວທີ່ບໍ່ມີການປະສານງານ ແລະ ໄປໃນທິດທາງທີ່ຕ່າງກັນຂອງທັງ ສອງປະເທດ ຈະຍິ່ງເຮັດໃຫ້ສະຖານະການຮ້າຍແຮງຂຶ້ນ.

| ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳໃນເຂດສາມຫຼ່ຽມປາກແມ່ນ້ຳຂອງ | | |
|---|---|---|
| ປະເທດ: ຣາຊະອານາຈັກ ກຳປູເຈຍ, ສສ ຫວຽດນາມ | ງົບປະມານ: US$ 354,000 | ໄລຍະເວລາ: ພຶດສະພາ 2014 - ມີນາ 2018 |




ລັດຖະບານ ຣາຊະອານາຈັກ ກຳປູເຈຍ ແລະ ສສ ຫວຽດນາມ ໄດ້ເອົາໃຈໃສ່ເລື່ອງການຮ່ວມມືດ້ານການນຳໃຊ້ນ້ຳ ໃນເຂດສາມຫຼ່ຽມປາກແມ່ນ້ຳຂອງ, ແຕ່ຍັງເຫັນວ່າສາມາດເຮັດໃຫ້ໄດ້ດີກວ່າເກົ່າ ເພື່ອຈັດການກັບສິ່ງທ້າຍທາຍເຫຼົ່ານີ້ຢ່າງ ມີປະສິດທິຜົນ.

## ການດຳເນີນງານຮ່ວມກັນ ເພື່ອການແກ້ໄຂບັນຫາຢ່າງຍືນຍົງ

ໂຄງການຄຸ້ມຄອງຊັບພະຍາກອນນ້ຳໃນເຂດສາມຫຼ່ຽມປາກແມ່ນ້ຳຂອງ ສະໜັບສະໜູນ ມາດຕະການ ຂອງລັດຖະບານໃນການຫລຸດຜ່ອນ ຜົນກະທົບໃນເຂດສາມຫຼ່ຽມ. ໂຄງການດັ່ງກ່າວໄດ້ຊ່ວຍປະເທດ ທີ່ເຂົ້າຮ່ວມໃນການສ້າງກົນໄກ ແລະ ການວາງແຜນທີ່ເໝາະສົມ ເພື່ອ ການຄຸ້ມຄອງ ແລະ ພັດທະນາຊັບພະຍາກອນນ້ຳ ທີ່ກົມກຽວ ໃນພາກພື້ນ.

ໂຄງການໄດ້ຊ່ວຍໃນການລະບຸ ບັນຫາທີ່ສຳຄັນ ທີ່ເປັນຕົວກີດຂວາງຕໍ່ການຄຸ້ມຄອງນ້ຳ ລວມທັງ ການຂາດການວາງແຜນຮ່ວມກັນ ເພື່ອການພັດທະນາໂຄງລ່າງພື້ນຖານ ແລະ ການຂາດກົນໄກການປະສານງານ ເພື່ອຄຸ້ມຄອງ ແລະ ແລກປ່ຽນຂໍ້ມູນ.

ໂຄງການໄດ້ອຳນວຍຄວາມສະດວກ ໃຫ້ແກ່ການປຶກສາຫາລືສອງຝ່າຍ ເພື່ອສ້າງວິທີການປະສານສົມທົບ ແລະ ກິດຈະກຳຮ່ວມກັນ ເຂົ້າໃນການແກ້ໄຂບັນຫາຂ້າມຊາຍແດນດັ່ງກ່າວ. ໂຄງການຍັງຊ່ວຍໃນການສ້າງກົນໄກການແລກປ່ຽນຂໍ້ມູນ ແລະ ຂ່າວສານ ກໍຄື ຍຸດທະສາດການຕິດຕາມກວດກາອ່າງ ເພື່ອຮັບປະກັນການນຳໃຊ້ຊັບພະຍາກອນນ້ຳ ຮ່ວມກັນໃຫ້ຍືນຍົງ.

ການດຳເນີນການເຫຼົ່ານີ້ ລວມເຂົ້າກັນຈະ ສາມາດສະໜັບສະໜູນ ຄວາມຍືນຍົງ ຂອງ ລະບົບນິເວດ ໃນເຂດສາມຫຼ່ຽມປາກແມ່ນ້ຳຂອງ, ຊ່ວຍໃຫ້ບັນລຸ ການພັດທະນາເສດຖະກິດ-ສັງຄົມຢ່າງຍືນຍົງ ແລະ ຍົກລະດັບຊີວິດການເປັນຢູ່ໃນພາກພື້ນ.

## ຜົນໄດ້ຮັບຈາກໂຄງການ:

- → ລະບຸບັນຫາ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນ້ຳຂ້າມຊາຍແດນ.
- → ສ້າງກົນໄກການປະສານງານຂ້າມຊາຍແດນ ເພື່ອ ຈັດການກັບບັນຫາດັ່ງກ່າວ.
- → ສ້າງແຜນດຳເນີນງານສອງຝ່າຍ ເພື່ອຈັດຕັ້ງປະຕິບັດກົນໄກການປະສານງານ.



# ໂຄງການຄຸ້ມຄອງດິນບໍລິເວນນ້ຳ ໃນເຂດແມ່ນ້ຳຄາມ ແລະ ເຊບັ້ງຫຽງ

## ສົ່ງເສີມການແລກປ່ຽນຄວາມຮູ້ ເພື່ອດິນບໍລິເວນນ້ຳທີ່ຍືນຍົງ

ດິນບໍລິເວນນ້ຳ ໃນເຂດ ເຊບັ້ງຫຽງ ຂອງ ສປປ ລາວ ແລະ ອ່າງແມ່ນ້ຳຄາມ ຂອງ ຣາຊະອານາຈັກ ໄທ ໄດ້ສະໜັບສະໜູນຊີວິດການເປັນຢູ່ຂອງ ປະຊາຊົນທ້ອງຖິ່ນ, ສະໜອງສະພາບແວດລ້ອມ ທີ່ເໜັງຕີງເໝາະສົມຕໍ່ ການປູກເຂົ້າ, ການປະມົງນ້ຳຈືດ ແລະ ການທ່ອງທ່ຽວ.

ເຂດເຊຈຳພອນ ໃນ ອ່າງເຊບັ້ງຫຽງ ເປັນເຂດດິນບໍລິເວນນ້ຳແຫ່ງໜຶ່ງທີ່ສຳຄັນທີ່ສຸດຂອງປະເທດ ເຊິ່ງ ຖືກກຳນົດ ເປັນເຂດ ດິນບໍລິເວນນ້ຳສາກົນ ພາຍໃຕ້ສົນທິສັນຍາ ຣາມຊາ ຍ້ອນ ລະບົບນິເວດທີ່ອຸດົມຮັ່ງມີຂອງເຂດດັ່ງ ກ່າວ. ເຂດນີ້ ຍັງມີຄວາມ ສຳຄັນ ຕໍ່ ການດຳລົງຊີວິດ ເນື່ອງຈາກມີຮ່ອງນ້ຳຫຼາຍສາຍ, ບຶງນ້ຳຈືດ ແລະ ທົ່ງນາເຂົ້າ.

ຂ້າມຊາຍແດນໄປ ແມ່ນເຂດດິນບໍລິເວນນ້ຳ ໜອງຫານ ທີ່ນອນຢູ່ໃນເຂດອ່າງນ້ຳຄາມ ທີ່ມີລັກສະນະດຽວກັນ ຄືມີ ຄວາມອຸດົມຮັ່ງມີທາງຊີວະນາໆພັນ ລວມມີ ປາ ຫຼາຍກວ່າ 40 ສາຍພັນ, ພືດທາງນ້ຳທີ່ເປັນເອກະລັກ, ທົ່ງນາເຂົ້າ ທີ່ປະກອບສ່ວນຕໍ່ເສດຖະກິດທ້ອງຖິ່ນ ແລະ ການພັດທະນາສັງຄົມໃນເຂດ ພາກຕາເວັນອອກ ສ່ຽງເໜືອຂອງ ຣາຊະອານາຈັກ ໄທ.

ຊັບພະຍາກອນດິນບໍລິເວນນ້ຳ ຢູ່ທັງສອງອ່າງ ພົບກັບສິ່ງທ້າທາຍ ທີ່ຄ້າຍຄືກັນ ເຊັ່ນ ການປ່ຽນແປງດິນຟ້າອາກາດ ແລະ ຄວາມຕ້ອງການນຳໃຊ້ນ້ຳ ທີ່ເພີ່ມຂຶ້ນ ເຖິງແມ່ນວ່າ ລະດັບການພັດທະນາ ເສດຖະກິດ ແລະ ການປົກປັກ ຮັກສາຊັບພະຍາກອນທຳມະຊາດ ຈະແຕກຕ່າງກັນ ກໍຕາມ. ປະເດັນດັ່ງກ່າວຈຶ່ງ ເປັນໂອກາດເໝາະສົມໃຫ້

| ໂຄງການ ຄຸ້ມຄອງດິນບໍລິເວນນ້ຳ ໃນເຂດແມ່ນ້ຳຄາມ ແລະ ເຊບັ້ງຫຽງ | | |
|---|---|---|
| ປະເທດ: ສປປ ລາວ, ຣາຊະອານາຈັກໄທ | ງົບປະມານ: US$ 354,000 | ໄລຍະເວລາ: ທັນວາ 2013 - ມິນາ 2018 |

ທັງສອງອ່າງນີ້ແລກປ່ຽນບົດຮຽນ ແລະ ຄວາມຮູ້ເພື່ອສົ່ງເສີມການພັດທະນາ ທີ່ເອື້ອອຳນວຍແກ່ຜູ້ທຸກຍາກ.




## ການດຳເນີນງານຮ່ວມກັນ ເພື່ອ ການແກ້ໄຂບັນຫາຢ່າງຍືນຍົງ

ໂຄງການຄຸ້ມຄອງດິນບໍລິເວນນ້ຳ ໃນເຂດແມ່ນ້ຳຄານ ແລະ ເຊບັ້ງຫຽງ ເປັນເວທີ ສົ່ງເສີມການແລກປ່ຽນຄວາມຮູ້ ລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ ໃນການອະນຸລັກ ແລະ ພັດທະນາຊັບພະຍາກອນດິນບໍລິເວນນ້ຳ.

ໂຄງການດັ່ງກ່າວ ໄດ້ຊ່ວຍປັບປຸງ ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ເພື່ອສະໜັບສະໜູນການວາງແຜນອ່າງນ້ຳ, ການຄຸ້ມຄອງນ້ຳຖ້ວມ ແລະ ການນຳໃຊ້ອ່າງເກັບນ້ຳ ເຂົ້າໃນວຽກງານ ຊົນລະປະທານ, ການປະມົງ ແລະ ການສະໜອງນ້ຳສະອາດ ຢ່າງຍືນຍົງ.

ກຸ່ມອ່າງແມ່ນ້ຳທ້ອງຖິ່ນ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຄະນະວິຊາການສອງຝ່າຍ ໄດ້ດຳເນີນການຄົ້ນຄວ້າ ພາກສະໜາມ ແລະ ຕ່າງຝ່າຍກໍໄດ້ຢ້ຽມຢາມແລກປ່ຽນຄວາມຮູ້ ກ່ຽວກັບ ບັນຫາ ຂອງ ດິນບໍລິເວນນ້ຳທີ່ຄ້າຍຄືກັນ ແລະ ວິທີການຄຸ້ມຄອງທີ່ດີທີ່ສຸດ.

ຄະນະວິຊາການຂອງໂຄງການ ໄດ້ເລີ່ມກິດຈະກຳການຮຽນຮູ້ຮ່ວມກັນ ລວມທັງ ການສ້າງແຜນທີ່ ໃນລະບົບຂໍ້ມູນຂ່າວສານພູມສາດ ແລະ ກະກຽມແຜນການຄຸ້ມຄອງດິນບໍລິເວນນ້ຳແບບຊຸມຊົນ ໃນເຂດທີ່ຖືກຄັດເລືອກ.

## ຜົນໄດ້ຮັບຈາກໂຄງການ:

→ ສ້າງຕັ້ງກຸ່ມອ່າງແມ່ນ້ຳແບບຊຸມຊົນ ແລະ ຍົກລະດັບຄວາມສາມາດຂອງເຂົາເຈົ້າໃນການວາງແຜນ ຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ.

→ ມີການຮຽນຮູ້ ກ່ຽວກັບ ບັນຫາທີ່ຕິດພັນກັບ ດິນບໍລິເວນນ້ຳ ແລະ ວິທີການຄຸ້ມຄອງໃນ ເຂດດິນບໍລິເວນນ້ຳເຊຈຳພອນ ແລະ ໜອງຫານ ຜ່ານ ການຢ້ຽມຢາມແລກປ່ຽນຄວາມຮູ້ປະສົບການ.

→ ແລກປ່ຽນຄວາມຮູ້ ກ່ຽວກັບ ການຄຸ້ມຄອງນ້ຳແບບຊຸມຊົນ ລະຫວ່າງ ສອງເຂດ ໂດຍການສ້າງແຜນການຄຸ້ມຄອງ ໃນເຂດທີ່ຖືກຄັດເລືອກ.



# ໂຄງການເຜີຍແຜ່ບົດຮຽນ ກ່ຽວກັບ ອ່າງທະເລສາບ ສົງຂລາ ແລະ ຕົ່ງເລຊາບ

## ການແລກປ່ຽນປະສົບການ ເພື່ອ ສ້າງທະເລສາບທີ່ອຸດົມສົມບູນ

ຕົ່ງເລຊາບ ຂອງ ຣາຊະອານາຈັກ ກຳປູເຈຍ ແລະ ທະເລສາບສົງຂລາ ແມ່ນແຫຼ່ງທຳມາຫາກິນ ທີ່ສຳຄັນ ສຳລັບຊີວິດການເປັນຢູ່ຂອງຫຼາຍລ້ານຄົນ ທີ່ອາໃສຢູ່ ອ້ອມຂ້າງ. ການຄຸ້ມຄອງຊັບພະຍາກອນຂອງ ທະເລສາບແບບຊຸມຊົນ ແມ່ນໝາກຫົວໃຈ ຂອງ ທັງສອງເຂດ ເພື່ອສົ່ງເສີມການພັດທະນາແບບຍືນຍົງ ຂອງອ່າງແມ່ນ້ຳຂອງຕອນລຸ່ມ ແລະ ອື່ນໆ.

ຕົ່ງເລຊາບ ແມ່ນທະເລສາບນ້ຳຈືດຂະໜາດໃຫຍ່ທີ່ສຸດ ໃນອາຊີຕາເວັນອອກສ່ຽງໃຕ້ ເຊິ່ງ ຈະຂະຫຍາຍກວ້າງຂຶ້ນເຖິງ 6 ເທື່ອ ໃນລະດູນ້ຳຖ້ວມ ກວມເອົາເນື້ອທີ່ 15,000 ກິໂລຕາແມັດ. ໃນຂະນະທີ່ຕົ່ງເສຊາບຈະລະບາຍນ້ຳອອກໄປສູ່ ແມ່ນ້ຳຂອງ ໃນລະດູແລ້ງ, ໃນລະດູຝົນ ເຂດດັ່ງກ່າວຈະຮັກສາການໄຫຼເຮັດໃຫ້ເກີດນ້ຳຖ້ວມ. ຮອບວຽນທາງອຸທົກກະສາດທີ່ ສຳຄັນນີ້ ຊ່ວຍໃຫ້ມີຄວາມອຸດົມສົມບູນ ຂອງ ປາ, ພືດ ແລະ ສັດປ່າ ເຊິ່ງ ລ້ວນແລ້ວແຕ່ເປັນແຫຼ່ງຊັບພະຍາກອນສຳຄັນ ປະຄອງຊີວິດການເປັນຢູ່ ຂອງປະຊາຊົນ ກຳປູເຈຍ.

ນອກຈາກອ່າງແມ່ນ້ຳຂອງ, ທະເລສາບສົງຂລາ ຂອງ ຣາຊະອານາຈັກໄທ ແມ່ນ ທະເລສາບທີ່ໃຫຍ່ທີ່ສຸດຂອງປະເທດທີ່ມີນ້ຳຈືດປົນກັບນ້ຳທະເລ. ທະເລສາບສົງຂລາ ກວມເນື້ອທີ່ 1,040 ກິໂລຕາແມັດ ໃນພາກໃຕ້ ຂອງປະເທດ ແລະ ສະໜອງແຫຼ່ງຊັບພະຍາກອນໃຫ້ແກ່ ຊີວິດການເປັນຢູ່ຂອງຄົນໃນເຂດດັ່ງກ່າວ, ນັບຕັ້ງແຕ່ການກະສິກຳ ຫາ ການປະມົງ ຕະຫຼອດຮອດ ການທ່ອງທ່ຽວ. ເຂດດັ່ງກ່າວມີຊື່ສຽງ ເລື່ອງ ຄວາມເອົາໃຈໃສ່ ຂອງຊຸມຊົນ

| ໂຄງການເຜີຍແຜ່ບົດຮຽນ ກ່ຽວກັບ ອ່າງທະເລສາບສົງຂລາ ແລະ ຕົ່ງເລຊາບ | | |
|---|---|---|
| ປະເທດ: ຣາຊະອານາຈັກ ກຳປູເຈຍ, ຣາຊະອານາຈັກໄທ | ງົບປະມານ: US$ 457,000 | ໄລຍະເວລາ: ຕຸລາ 2013 - ມີນາ 2018 |




ໃນການປົກປັກຮັກສາ ແລະ ຄຸ້ມຄອງຊັບພະຍາກອນຮ່ວມກັນ.

ເອກະລັກເຫຼົ່ານີ້ ເຮັດໃຫ້ທັງສອງເຂດ ເໝາະສົມໃນການແລກປ່ຽນປະສົບການ ເພື່ອໃຫ້ທະເລສາບທັງສອງແຫ່ງອຸດົມສົມບູນຕໍ່ໜ້າ ສະພາບຄວາມທ້າທາຍທາຍທີ່ຄ້າຍຄືກັນເຊັ່ນ: ວິທີການປະມົງທີ່ບໍ່ຍືນຍົງ ແລະ ຜົນກະທົບຈາກ ພາວະໂລກຮ້ອນຂຶ້ນ.

## ການດຳເນີນງານຮ່ວມກັນ ເພື່ອ ການແກ້ໄຂບັນຫາຢ່າງຍືນຍົງ

ໂຄງການເຜີຍແຜ່ບົດຮຽນ ກ່ຽວກັບ ອ່າງທະເລສາບສົງຂລາ ແລະ ຕົ່ງເລຊາບ ໄດ້ສ້າງໂອກາດໃຫ້ ຣາຊະອານາຈັກ ກຳປູເຈຍ ແລະ ຣາຊະອານາຈັກໄທ ປຶກສາຫາລື ແລະ ແລກປ່ຽນບົດຮຽນໃນການຄຸ້ມຄອງຊັບພະຍາກອນທຳມະຊາດ.

ໂຄງການ ໄດ້ປູກຈິດສຳນຶກ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ເພື່ອປົກປັກຮັກສາທະເລສາບ ໂດຍ ຊຸມຊົນ ແລະ ລະຫວ່າງສອງເຂດ ເຊິ່ງຈະຊ່ວຍສ້າງຄວາມອາດສາມາດ ໃນການຄຸ້ມຄອງທະເລສາບ ແບບຊຸມຊົນ ເພື່ອ ຈັດການກັບ ສິ່ງທ້າຍທາຍຫຼັກ ຂອງທັງສອງເຂດ.

ການຢ້ຽມຢາມຂອງທັງສອງເຂດໄດ້ຈັດຂຶ້ນ ເພື່ອແລກປ່ຽນບົດຮຽນ ໃນການຄຸ້ມຄອງທະເລສາບລວມທັງການຄຸ້ມຄອງການປະມົງແບບຊຸມຊົນ, ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ. ແຜນງານລິເລີ່ມໃນການແລກປ່ຽນຮູບເງົາ ໄດ້ຊ່ວຍສົ່ງເສີມການຮຽນຮູ້ໂດຍຜ່ານການສ້າງຮູບເງົາຮ່ວມກັນ ແລະ ແມ່ນຊຸມຊົນເປັນຜູ້ສ້າງເອງ. ທັງສອງເຂດ ຈະສ້າງບົດລາຍງານກ່ຽວກັບບົດຮຽນທີ່ໄດ້ຮ່ວມກັນ ແລະ ຄູ່ມືໃນການການປົກຄອງທະເລສາບ.

## ຜົນໄດ້ຮັບຈາກໂຄງການ:

- ສ້າງຄວາມເຂັ້ມແຂງໃນການປົກຄອງທະເລສາບ ຜ່ານການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ.
- ຍົກລະດັບຄວາມເຂົ້າໃຈ ກ່ຽວກັບ ທາງເລືອກ ດ້ານນະໂຍບາຍ ເພື່ອສະໜັບສະໜູນ ຊີວິດການເປັນຢູ່ຂອງປະຊາຊົນ ທີ່ອາໄສຊັບພະຍາກອນ ໃຫ້ຍືນຍົງ.
- ຍົກສູງຄວາມຕື່ນຕົວຂອງມະຫາຊົນ ໃນການພັດທະນາ ແລະ ປົກປັກຮັກສາ ທະເລສາບໃຫ້ອຸດົມສົມບູນ.





**ກອງເລຂາຄະນະກຳມາທິການ ແມ່ນ້ຳຂອງສາກົນ**

184 ຖະໜົນຟ້າງຸ່ມ
ຕູ້ ປ.ນ 6101, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 263 263
ແຟັກ: +856 21 264 264
ອີເມວ: mrcs@mrcmekong.org
www.mrcmekong.org



© ຄະນະກຳມາທິການແມ່ນ້ຳຂອງສາກົນ 2017